# ການເປີດປະກັນສຸຂະພາບໃຫ້ທຸກຄົນ!

## ໃໝ່! ຕອນນີ້, ການຊື້ປະກັນສຸຂະພາບແມ່ນງ່າຍຂຶ້ນ ສໍາລັບຄົນເຂົ້າເມືອງທີ່ບໍ່ມີເອກະສານບັນທຶກ.

ນັບຕັ້ງແຕ່ເດືອນພະຈິກນີ້, ທຸກຄົນທີ່ອາໄສໃນລັດວໍຊິງຕັນຈະສາມາດຊື້ປະກັນສຸຂະພາບ ແລະ ແຂ້ວຜ່ານ *Washington Healthplanfinder*, ບໍ່ວ່າຈະມີສະຖານະການເຂົ້າເມືອງແນວໃດກໍ່ຕາມ.

## ທຸກຄົນສາມາດລົງທະບຽນຕັ້ງແຕ່ວັນທີ 1 ພະຈິກ 2023

ລົງທະບຽນພາຍໃນວັນທີ 15 ທັນວາ ສໍາລັບການຄຸ້ມຄອງສຸຂະພາບທີ່ເລີ່ມຕົ້ນໃນວັນທີ 1 ມັງກອນ 2024. ການລົງທະບຽນແບບເປີດຈະສິ້ນສຸດລົງໃນວັນທີ 15 ມັງກອນ 2024.

## ຂໍການຊ່ວຍເຫຼືອສໍາລັບເງິນປະກັນໄພປະຈໍາເດືອນຂອງທ່ານ

*ສ່ວນຫຼຸດສໍາລັບຜູ້ມີລາຍໄດ້ຕໍ່າ*

ທ່ານອາດເຂົ້າເກນສໍາລັບ Cascade Care Savings, ເຊິ່ງໝາຍຄວາມວ່າລັດວໍຊິງຕັນຈະຈ່າຍເງິນສໍາລັບສ່ວນໜຶ່ງໃນປະກັນສຸຂະພາບຂອງທ່ານ. ຖ້າລາຍໄດ້ຄົວເຮືອນຂອງທ່ານແມ່ນຢູ່ພາຍໃນຂອບເຂດຂ້າງລຸ່ມ, ທ່ານອາດເຂົ້າເກນ.

| $36,450 | $49,300 | $62,150 | $75,000 | $87,850 | $100,700 |
|---|---|---|---|---|---|
| ບຸກຄົນດຽວ | ຄອບຄົວທີ່ມີສະມາຊິກ 2 ຄົນ | ຄອບຄົວທີ່ມີສະມາຊິກ 3 ຄົນ | ຄອບຄົວທີ່ມີສະມາຊິກ 4 ຄົນ | ຄອບຄົວທີ່ມີສະມາຊິກ 5 ຄົນ | ຄອບຄົວທີ່ມີສະມາຊິກ 6 ຄົນ |

## ຄວາມປອດໄພຂອງທ່ານເປັນສິ່ງສໍາຄັນສໍາລັບພວກເຮົາ.

- ການລົງທະບຽນຈະບໍ່ສົ່ງຜົນກະທົບຕໍ່ສະຖານະການເຂົ້າເມືອງ ຫຼື ການສະໝັກຂໍຄວາມເປັນພົນລະເມືອງສໍາລັບທ່ານ, ຄອບຄົວຂອງທ່ານ ຫຼື ຄົນໃດກໍ່ຕາມທີ່ອາໄສກັບທ່ານ.
- ກົດໝາຍຂອງລັດຖະບານກາງ ແລະ ຂອງລັດຈະປົກປ້ອງຄວາມເປັນສ່ວນຕົວຂອງປະຊາຊົນທີ່ສະໝັກຂໍປະກັນສຸຂະພາບຜ່ານ *Washington Healthplanfinder.* ຂໍ້ມູນກ່ຽວກັບສະຖານະການເຂົ້າເມືອງແມ່ນຈະຖືກໃຊ້ເພື່ອກໍານົດເງື່ອນໄຂສິດສໍາລັບການຄຸ້ມຄອງເທົ່ານັ້ນ ແລະ ບໍ່ແມ່ນເພື່ອບັງຄັບໃຊ້ກົດໝາຍການເຂົ້າເມືອງ.

## ຕ້ອງການການຊ່ວຍເຫຼືອບໍ? 3 ຊ່ອງທາງເພື່ອຂໍການຊ່ວຍເຫຼືອສໍາລັບການລົງທະບຽນໂດຍບໍ່ເສຍຄ່າ

### ໂທ

ສູນຊ່ວຍເຫຼືອລູກຄ້າ

**ໂທຟຣີ: 1-855-923-4633**

**TTY/TDD: 1-855-627-9604**

*ຊົ່ວໂມງ: 7:30 ເຊົ້າ ຫາ 5:30 ແລງ ການຊ່ວຍເຫຼືອແມ່ນມີໃຫ້ໃນຫຼາຍກວ່າ 200 ພາສາ.*

### ເຂົ້າເບິ່ງ

ເວັບໄຊຂອງພວກເຮົາ

**wahealthplanfinder.org**

*ຫຼື ສະແກນລະຫັດ QR ດ້ວຍກ້ອງຖ່າຍຮູບຂອງທ່ານ*

### ພົວພັນ

ກັບຜູ້ຊ່ຽວຊານໃນທ້ອງຖິ່ນ *

*ຕິດຕໍ່ຂ້າພະເຈົ້າໃນວັນທີ 1 ພະຈິກ ເພື່ອລົງທະບຽນ!*

**ຜູ້ນໍາທາງ ແລະ ນາຍໜ້າສາມາດຊ່ວຍໃຫ້ທ່ານເຂົ້າໃຈການຊ່ວຍເຫຼືອດ້ານການເງິນທີ່ມີໃຫ້, ຕອບຄໍາຖາມກ່ຽວກັບການປະກັນສຸຂະພາບ ແລະ ຊ່ວຍໃຫ້ທ່ານເລືອກຊື້ແຜນປະກັນ. ຖ້າທ່ານບໍ່ຮູ້ວ່າຄົນໃດໜຶ່ງໄດ້ຮັບການຢັ້ງຢືນເພື່ອຊ່ວຍເຫຼືອທ່ານ ຫຼື ບໍ່, ກະລຸນາໂທຫາສູນຊ່ວຍເຫຼືອລູກຄ້າຂອງ Washington Healthplanfinder ທີ່ 1-855-923-4633.*

washington healthplanfinder
click. compare. covered.